ຄວາມປອດໄພເມື່ອເກີດແຜ່ນດິນໄຫວ

ແຜ່ນດິນໄຫວສາມາດເກີດຂຶ້ນໄດ້ທຸກເວລາໂດຍທີ່ບໍ່ມີການເຕືອນກ່ອນ. ການບໍລິການຫຼາຍໆຢ່າງທີ່ທ່ານອາໄສຢູ່ໃນທຸກໆມື້ອາດຈະຖືກຕັດຂາດເຊັ່ນ: ໄຟຟ້າ, ແກ໊ສທຸງຕຸ້ມ, ນ້ຳປະປາ, ການສື່ສານ ແລະການຂົນສົ່ງ.

ສະມາຄົມກາແດງອາເມຣິກາຢູ່ໃນເຂດອ່າວສະໜອງຂໍ້ມູນຕໍ່ໄປນີ້ເພື່ອເຮັດໃຫ້ທ່ານ ແລະຄົນທີ່ທ່ານຮັກມີຄວາມປອດໄພ ຖ້າເກີດແຜ່ນດິນໄຫວຂຶ້ນກັບພື້ນທີ່ຂອງທ່ານຄື:

ວາງແຜນການ

ການວາງແຜນການລ່ວງໜ້າແມ່ນເປັນຂັ້ນຕອນທຳອິດເພື່ອຮັບປະກັນວ່າຄອບຄົວຂອງທ່ານໄດ້ມີການກຽມພ້ອມຕໍ່ແຜ່ນດິນໄຫວ.

- ສ້າງແຜນການສື່ສານ: ມັນມັກຈະເປັນເລື່ອງງ່າຍກວ່າທີ່ຕ້ອງໂທທາງໄກຫຼັງຈາກໄພພິບັດ, ດັ່ງນັ້ນ ຈົ່ງຊອກຫາການຕິດຕໍ່ທີ່ຢູ່ນອກເຂດ ເຊິ່ງເປັນຜູ້ໃຫ້ການບໍລິການເປັນບຸກຄົນເຊື່ອມຕໍ່ໃຈກາງ. ໃຫ້ທຸກໆຄົນລາຍງານສະຖານະພາບຂອງຕົນເອງໃຫ້ກັບຜູ້ຕິດຕໍ່ນີ້ ເຊິ່ງຈະເປັນຜູ້ສົ່ງຂໍ້ມູນໄປໃຫ້ຜູ້ອື່ນໆ. ຈົ່ງໃຫ້ຜູ້ຕິດຕໍ່ຢູ່ນອກເຂດຂອງທ່ານຮູ້ຈັກກັບແຜນການສື່ສານຂອງທ່ານ. ສຳລັບເຫດການຂະໜາດນ້ອຍ ແມ່ນຕ້ອງໃຫ້ແນ່ໃຈວ່າມີລາຍລະອຽດຕິດຕໍ່ກັບໜ່ວຍງານສຸກເສີນທີ່ຢູ່ໃກ້.
- ກຳນົດບ່ອນທີ່ຈະໄປພົບກັນຫຼັງຈາກໄພພິບັດ: ເລືອກເອົາສະຖານທີ່ໃກ້ບ້ານ ໃນກໍລະນີທີ່ມີເຫດການສຸກເສີນກະທັນຫັນ. ເລືອກເອົາສະຖານທີ່ບ່ອນທີສອງຢູ່ນອກບ້ານຂອງຕົນເອງ ໃນກໍລະນີທີທ່ານບໍ່ສາມາດກັບບ້ານໄດ້. ພ້ອມນັ້ນຕ້ອງໃຫ້ຮູ້ຈັກບ່ອນທີ່ຈະຍົກຍ້າຍອອກໄປພັກຢູ່ ທີ່ຢູ່ໃນບ່ອນເຮັດວຽກ, ໂຮງຮຽນ ຫຼືບ່ອນໃຫ້ການດູແລກາງເວັນ.
- **ເລືອກເບິ່ງສະຖານທີ່ປອດໄພຢູ່ໃນແຕ່ລະຫ້ອງ:** ບ່ອນທີ່ປອດໄພສາມາດເປັນບ່ອນທີ່ຢູ່ລຸ່ມເຄື່ອງເຟີນິເຈີທີ່ມີຄວາມແຂງທົນທານ ຫຼືຢູ່ແປະກັບຝາທີ່ຢູ່ໄກຈາກປ່ອງຢ້ຽມ, ຖ້ານວາງປື້ມ, ຫຼືເຟີນິເຈີອັນສູງທີ່ສາມາດຕົກລົງມາທັບທ່ານໄດ້.
- ກຳນົດເສັ້ນທາງການຫຼົບໜີ: ຊອກຫາສອງເສັ້ນທາງອອກໃນແຕ່ລະຫ້ອງຢູ່ໃນບ້ານຂອງທ່ານ ແລະຮູ້ຈັກກັບເສັ້ນທາງການຍົກຍ້າຍອອກໄປນອກເຂດຂອງທ່ານ.
- ວາງແຜນການສຳລັບສັດລ້ຽງຂອງທ່ານ: ໂດຍຂໍ້ຍົກເວັ້ນເລື່ອງການບໍລິການທາງດ້ານສັດແລ້ວ, ແມ່ນບໍ່ອະນຸຍາດໃຫ້ມີສັດລ້ຽງຢູ່ໃນເຂດຫຼົບໄພພິບັດ, ດັ່ງນັ້ນ ຈົ່ງກະກຽມບັນຊີສະມາຊິກຄອບຄົວ, ໝູ່ເພື່ອນ, ສິ່ງອຳນວຍຄວາມສະດວກໃນການອອກໄປ, ສັດຕະວະແພດ, ໂຮງແຮມທີ່ຮັບສັດລ້ຽງ ເພື່ອໃຫ້ເປັນບ່ອນຢູ່ຂອງສັດລ້ຽງຂອງທ່ານໃນເມື່ອມີເຫດການສຸກເສີນ. ສຳລັບຂໍ້ມູນເພີ່ມເຕີມເບິ່ງໃນໜ້າ Pets & Disaster Safety.

- ເຮັດແຜນການສ່ວນຕົວ: ຖ້າທ່ານມີຄວາມຕ້ອງການພິເສດ, ໃຫ້ແນ່ໃຈວ່າໄດ້ຈັດແຈງໃຫ້ມີເຄືອຂ່າຍເພື່ອນບ້ານ, ໝູ່ເພື່ອນ ຫຼືຍາດພີ່ນ້ອງ ເພື່ອກວດເຊັກເບິ່ງທ່ານໃນເມື່ອມີເຫດການສຸກເສີນ.
- ທົບທວນ ແລະຝຶກຊ້ອມແຜນການຂອງທ່ານ

ໃຫ້ມີຊຸດເຄື່ອງມື

ຈັດຫາໃຫ້ມີເຄື່ອງໃຊ້ສອຍຈຳເປັນຕ່າງໆໃຫ້ພຽງພໍກັບທຸກຄົນໃນເຮືອນຂອງທ່ານຢ່າງໜ້ອຍສາມວັນ. ລວມເຖິງສິ່ງທີ່ຈຳເປັນຕ່າງໆສຳລັບສັດລ້ຽງ, ເດັກນ້ອຍ, ຜູ້ອາວຸໂສ ແລະຜູ້ພິການ. ກຽມຊຸດເຄື່ອງມືໄວ້ໃນບ້ານ, ໃນບ່ອນເຮັດວຽກ ແລະໃນລົດຂອງທ່ານ.

• ອາຫານທີ່ບໍ່ເນົ່າເປື່ອຍງ່າຍ: ສິ່ງຕ່າງໆທີ່ຢູ່ໃນຫໍ່ເຊັ່ນ: ກ້ອນຂະໜົມໃຫ້ພະລັງງານ, ນ້ຳຊຸບໃນກະປ໋ອງ ຫຼືເນີຍໝາກຖົ່ວດິນ.
• ນ້ຳໜຶ່ງແກນລອນຕໍ່ຄົນຕໍ່ມື້
• ຊຸດເຄື່ອງຊ່ວຍເຫຼືອເບື້ອງຕົ້ນ ແລະຢາປົ່ນປົວຕ່າງໆ
• ໄຟສາຍ, ວິທະຍຸສື່ສານໃຊ້ຖ່ານ ຫຼືແບບໃຊ້ລານ, ເຄື່ອງມືທີ່ຈຳເປັນ ແລະແຜນທີ່ຄື: ໃຫ້ລວມເອົາທັງຖ່ານໄຟສາຍ, ກະແจເພື່ອໃຊ້ອັດຖັງແກ້ສໃນກໍລະນີມີການຮົ່ວໄຫຼ, ເຄື່ອງໄຂກະປ໋ອງ, ເຫຼັກໄຂຄວາງ, ຄ້ອນຕີ, ຄີມເຄົ້າ, ມີດ, ສະກອັດຕິດທໍ່ ແລະຖົງຂີ້ເຫຍື້ອ.
• ເຄື່ອງນຸ່ງ ແລະເກີບທີ່ທົນທານ
• ເຄື່ອງໃຊ້ສ່ວນຕົວ ແລະເຄື່ອງອະນາໄມ: ຫຸ້ມຫໍ່ເອກະສານທີ່ສຳຄັນ, ເຄື່ອງທຳຄວາມສະອາດ ແລະເຄື່ອງໃຫ້ຄວາມສະບາຍເຊັ່ນ: ປຶ້ມ ແລະເຄື່ອງຫຼິ້ນ.
• ເງິນສົດໃນໃບເງິນທີ່ມີຄ່າໜ້ອຍ
• ຂໍ້ມູນຕິດຕໍ່ສຸກເສີນ

ພ້ອມຮັບແຈ້ງ

ຮຽນຮູ້ວິທີການປົກປ້ອງຕົນເອງ ແລະເຂົ້າຝຶກເພື່ອຊ່ວຍເຫຼືອຜູ້ອື່ນກ່ອນ, ໃນເວລາ ແລະຫຼັງໄພພິບັດ.

ຖ້າທ່ານຢູ່ໃນເຮືອນ ໃນເວລາແຜ່ນດິນໄຫວເລີ່ມຕົ້ນ:

- ພັກຢູ່ໃນເຮືອນ, ໝອບລົງ, ຫາອັນປົດບັງ ແລະລໍຖ້າຢູ່ທີ່ນັ້ນ
- ໝອບລົງພື້ນ
- ເຂົ້າໄປຊ່ອນຢູ່ໃຕ້ຊິ້ນສ່ວນເຟີນິເຈີທີ່ໜັກ
- ປ້ອງກັນຫົວຂອງຕົນເອງດ້ວຍແຂນ
- ໃຊ້ແຂນອີກເບື້ອງໜຶ່ງຍຶດໄວ້ກັບເຟີນິເຈີ
- ເຄື່ອນເໜັງໄປກັບມັນ

- ຖ້າທ່ານບໍ່ຢູ່ໃກ້ກັບເພີນິເຈີທີ່ມີຄວາມແຂງທົນທານ, ໝອບລົງດ້ວຍການເອົາຫົວຂອງທ່ານພິງໃສ່ຝາດ້ານໃນ ແລະຫາອັນປົກຫົວ ແລະຄໍຂອງທ່ານ.
- ຖ້າທ່ານຢູ່ໃນລົດລໍ້, ໃຫ້ລອັກເບຣກ ແລະປົກຫົວ ແລະຄໍຂອງທ່ານ.
- ຖ້າທ່ານຢູ່ເທິງຕຽງນອນ, ໃຫ້ພັກຢູ່ເທິງຕຽງນັ້ນ, ດຶງເອົາຜ້າປູມາປົກຕົວຂອງທ່ານເພື່ອປ້ອງກັນບໍ່ໃຫ້ມີເສດຫັກພັງຕົກໃສ່ ແລະເອົາໝອນຂອງທ່ານປົກຫົວ ແລະຄໍຂອງທ່ານ.
- ການທີ່ພະຍາຍາມຫຼົບໜີອອກຈາກອາຄານແມ່ນຈະເຮັດໃຫ້ທ່ານມີຄວາມສ່ຽງຕໍ່ກັບການບາດເຈັບຫຼາຍ. ການບາດເຈັບຈາກແຜ່ນດິນໄຫວສ່ວນໃຫຍ່ແມ່ນເກີດຂຶ້ນ ເມື່ອຄົນພະຍາຍາມເຄື່ອນໜີໃນເວລາທີ່ກຳລັງເກີດພາວະແຜ່ນດິນໄຫວ ຫຼືຈາກການທີ່ມີເສດຊາກຫັກພັງຕົກລົງໃສ່ເມື່ອຢູ່ຂ້າງນອກ.

ຖ້າທ່ານຢູ່ນອກເຮືອນ ໃນເວລາແຜ່ນດິນໄຫວເລີ່ມຕົ້ນ:

- ໄປຢູ່ບ່ອນທີ່ໂລ່ງ, ຫ່າງໄກຈາກອາຄານ, ໄຟເຍືອງທາງ, ຕົ້ນໄມ້ ແລະສາຍໄຟອື່ນໆ.
- ເມື່ອຢູ່ໃນບ່ອນທີ່ໂລ່ງ, **ໝອບລົງ,** ຫາອັນປົດບັງ ແລະລໍຖ້າຢູ່ທີ່ນັ້ນຈົນກວ່າພາວະແຜ່ນດິນໄຫວຢຸດເຊົາ.
- ຖ້າທ່ານຢູ່ໃກ້ກັບອາຄານ, ໃຫ້ເຂົ້າໄປຂ້າງໃນຢ່າງໄວ ແລະ**ໝອບລົງ,** ຫາອັນປົດບັງ ແລະລໍຖ້າຢູ່ທີ່ນັ້ນ.
- ຖ້າທ່ານຢູ່ໃນລົດ, ຄ່ອຍໆຂັບໄປຢ່າງປອດໄພ, ຈອດລົດ ແລະປົກຫົວ ແລະຄໍຂອງທ່ານ.

ຫຼັງຈາກແຜ່ນດິນໄຫວ

ກວດເຊັກເບິ່ງການບາດເຈັບ: ທຳອິດກວດກາເບິ່ງການບາດເຈັບຂອງທ່ານ, ຈາກນັ້ນຈຶ່ງຊ່ວຍກວດເບິ່ງຜູ້ອື່ນ ອີງໃສ່ລະດັບການຝຶກເລື່ອງການຊ່ວຍເຫຼືອເບື້ອງຕົ້ນຂອງທ່ານ. ໃຫ້ໂທຫາການບໍລິການສຸກເສີນໄດ້ພຽງແຕ່ຖ້າຫາກມີສະຖານະການທີ່ເປັນໄພຕໍ່ຊີວິດເທົ່ານັ້ນ.

ຟັງວິທະຍຸ: ຜູ້ທີ່ຢູ່ໃນພື້ນທີ່ອ່າວສາມາດໝູນໄປຟັງວິທະຍຸຄື້ນ 740 ລະບົບ AM, 810 ລະບົບ AM ແລະ 88.5 ລະບົບ FM. ປະຕິບັດຕາມຄຳແນະນຳຈາກທາງການປະຈຳທ້ອງຖິ່ນ. ຍົກຍ້າຍອອກ ຖ້າໄດ້ຮັບການບອກໃຫ້ຍ້າຍອອກ. ນຸ່ງເຄື່ອງທີ່ປ້ອງກັນກະທົບໄດ້ ແລະໃສ່ເກີບທີ່ແຂງທົນທານ.

ກວດກາເບິ່ງຊ່ອງຫว่ານ: ກວດເຊັກເບິ່ງສະພາບທີ່ເປັນອັນຕະລາຍຢູ່ອ້ອມຕົວຂອງທ່ານເຊັ່ນ: ໄຟໄໝ້, ສາຍໄຟຟ້າຂາດ ແລະຄວາມເສຍຫາຍຂອງໂຄງສ້າງ. ປິດແກ້ສ ຖ້າທ່ານໄດ້ຮັບກິ່ນອອກມາ ຫຼືສົງໃສວ່າມີການຮົ່ວ. ຢູ່ຫ່າງໄກຈາກອາຄານທີ່ໄດ້ຮັບຄວາມເສຍຫາຍ ຫຼືໜີອອກໄປ ຖ້າທ່ານໄດ້ຮັບກິ່ນ

ແກ້ສ ຫຼືກິ່ນອາຍສານເຄມີອື່ນໆ. ເມື່ອທາງການປະກາດວ່າມີຄວາມປອດໄພແລ້ວຈຶ່ງກັບບ້ານ..

ເອົາແຜນການຂອງທ່ານເຂົ້າສູ່ການປະຕິບັດ: ຮັບປະກັນໃຫ້ລູກຂອງທ່ານ, ສັດລ້ຽງຂອງທ່ານ ແລະຄົນທີ່ທ່ານຮັກມີຄວາມປອດໄພ. ໂທຫາຜູ້ຕິດຕໍ່ຢູ່ນອກພື້ນທີ່ຂອງທ່ານ. ຈາກນັ້ນ ປ່ອຍໃຫ້ສາຍໂທລະສັບຫว่ານ ພ້ອມໃຊ້ງານໃນກໍລະນີສຸກເສີນ. ກວດເຊັກເບິ່ງເພື່ອນບ້ານຂອງທ່ານ ແລະຕ້ອງແນ່ໃຈໃຫ້ມີການຊ່ວຍເຫຼືອຜູ້ສູງອາຍຸ ແລະຄົນພິການ.